**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສໍານັກງານນາຍົກລັດຖະມົນຕີ**

ເລກທີ 142 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ 15.08.2008.

# ດໍາລັດ

## ວ່າດ້ວຍ ການສ້າງຕັ້ງ ກົມກວດກາ

- ອີງຕາມ ກົດໝາຍ ວ່າດ້ວຍການກວດກາລັດ ສະບັບເລກທີ 02 / ສພຊ, ລົງວັນທີ 02 ກໍລະກົດ 2007.
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 374 / ນຍ, ລົງວັນທີ 22 ຕຸລາ 2007 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ແຜນການ ແລະ ການລົງທຶນ.

## ນາຍົກລັດຖະມົນຕີ ອອກດໍາລັດ:

**ມາດຕາ 01:** ອະນຸມັດ ໃຫ້ສ້າງຕັ້ງກົມກວດກາ ຂຶ້ນກັບ ກະຊວງ ແຜນການ ແລະ ການລົງທຶນ.

**ມາດຕາ 02:** ມອບໃຫ້ ທ່ານລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ ອອກຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມດັ່ງກ່າວ ຢ່າງຮັດກຸມ ແລະ ມີປະສິດທິຜົນ.

**ມາດຕາ 03:** ສໍານັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ ແລະ ກະຊວງ ແຜນການ ແລະ ການລົງທຶນ ຈົ່ງຮັບຮູ້ ແລະ ປະຕິບັດຕາມດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 04:** ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ບົວສອນ ບຸບຜາວັນ